# ໂຄງການອາຫານການກິນຂອງຕລາດຊາວນາສໍາລັບຜູ້ເຖົ້າ
# ສິດທິແລະຫນ້າທີ່ຮັບຜິດຊອບຂອງຜູ້ເຂົ້າຮ່ວມ

ໂຄງການອາຫານການກິນຂອງຕລາດຊາວນາສໍາລັບຜູ້ເຖົ້າ (SFMNP) ຈະມີຫມາກໄມ້ແລະຜັກສົດໄວ້ໃຫ້ແກ່ຜູ້ເຖົ້າທີ່ມີລາຍໄດ້ຕ່ຳດ້ວຍຈຸດມຸ່ງຫມາຍທີ່ຈະສົ່ງເສີມສະພາບສຸຂະພາບແລະອາຫານການກິນຂອງເຂົາເຈົ້າ.ມັນຍັງອູ້ມຊູສນັບສນູນການເຮັດສວນທ້ອງຖິ່ນອີກໂດຍການເພີ້ມການໃຊ້ຕລາດຊາວນາແລະຮ້ານຂາຍຂ້າງທາງອີກ.ມັນໄດ້ຮັບເງິນທຶນສ່ວນນຶ່ງໂດຍເງິນທຶນຂອງຣັຖບານກາງຈາກ USDA.

<u>ສິດທິຂອງທ່ານ</u>

ໃນຖານະເປັນຜູ້ຮ້ອງຂໍ/ຜູ້ເຂົ້າຮ່ວມຂອງໂຄງການອາຫານການກິນຂອງຕລາດຊາວນາສໍາລັບຜູ້ເຖົ້າ,ທ່ານມີສິດ:

- ທີ່ຈະຖືກເຮັດນໍາດ້ວຍກຽດສັກສີ,ຄວາມນັບຖືແລະປາສຈາກການແບ່ງແຍກຊົນຊັ້ນວັນນະ;
- ທີ່ຈະຖືກແຈ້ງບອກໂດຍທາງຫນັງສືພາຍໃນ15ວັນຂອງໃບຄໍາຮ້ອງຖ້າຫາກວ່າທ່ານໄດ້ຖືກພິຈາຣະນາວ່າບໍ່ມີສິດໄດ້ຮັບ;
- ທີ່ຈະຍື່ນອຸທອນຄໍາຕັດສິນວ່າບໍ່ມີສິດໄດ້ຮັບຖ້າຫາກທ່ານຮູ້ສຶກວ່າການພິຈາຣະນາອັນນັ້ນໄດ້ຖືກເຮັດຜິດ;
- ທີ່ຈະໃຫ້ຣາຍລະອຽດທີ່ທ່ານໄດ້ເອົາໃຫ້ຖືກເກັບໄວ້ເປັນຄວາມລັບນອກຈາກວ່າທ່ານຂໍໃຫ້ແລກປ່ຽນໄດ້;
- ທີ່ຈະຍື່ນຄໍາຮ້ອງທຸກຖ້າຫາກວ່າທ່ານຮູ້ສຶກວ່າທ່ານບໍ່ໄດ້ຖືກເຮັດນໍາຍ່າງຍຸຕິທັມ;
- ທີ່ຈະໄດ້ຮັບຄໍາແນະນໍາອັນແຈ່ມແຈ້ງກ່ຽວກັບວ່າຈະໃຊ້ເຊັກເງິນທີ່ທ່ານໄດ້ຮັບແນວໃດແລະຢູ່ໃສ;
- ທີ່ຈະຮຽນຮູ້ກ່ຽວກັບການບໍຣິການຢ່າງອື່ນຊຶ່ງອາດຈະມີໄວ້ໃຫ້ທ່ານ.ທ່ານຈະຕິດຕໍ່ໄປຫາພແນກຣາຍລະອຽດແລະການຊ່ວຍເຫລືອສໍາລັບຜູ້ເຖົ້າໄດ້ຖ້າຫາກວ່າທ່ານປະສົງຢາກຈະຮູ້ຈັກກ່ຽວກັບການບໍຣິການຢ່າງອື່ນສໍາລັບຜູ້ເຖົ້າຢູ່ໃນເຂດຂອງທ່ານ.

<u>ຫນ້າທີ່ຮັບຜິດຊອບຂອງທ່ານ:</u>

ໃນຖານະເປັນຜູ້ຮ້ອງຂໍ/ຜູ້ເຂົ້າຮ່ວມຂອງໂຄງການອາຫານການກິນຂອງຕລາດຊາວນາສໍາລັບຜູ້ເຖົ້າ,ທ່ານມີຄວາມຮັບຜິດຊອບ:

- ທີ່ຈະເອົາຣາຍລະອຽດທີ່ຖືກຕ້ອງໃຫ້ອີງຕາມຄວາມຮັບຮູ້ທີ່ດີທີ່ສຸດຂອງທ່ານເພື່ອຈະພິຈາຣະນາເບິ່ງສິດທິຮັບການຊ່ວຍເຫລືອ;
- ທີ່ຈະເຂົ້າໃຈວ່າການເອົາຣາຍລະອຽດທີ່ບໍ່ຖືກຕ້ອງໃຫ້ແລະ/ຫລືການປົກປິດຄວາມຈິງໄວ້ໂດຍເຈຕນາສາມາດເປັນຜົນເຖິງການຈ່າຍເງິນຊ່ວຍເຫລືອແທນຄືນຂອງທ່ານຫລືການກະທໍາຕາມກົດຫມາຍ;
- ທີ່ຈະເຂົ້າໃຈວ່າການພະຍາຍາມທີ່ຈະຮັບເອົາການຊ່ວຍເຫລືອຫລາຍກວ່າເທື່ອນຶ່ງຫລືຢູ່ບ່ອນແຈກຢາຍຫລາຍໆບ່ອນໃນຣະຫວ່າງຣະດູປູກຝັງຈະເປັນຜົນເຖິງການຕັດອອກຈາກໂຄງການ;
- ທີ່ຈະບໍຣິໂພກຜົລປູກສົດທີ່ໄດ້ມາໂດຍຜ່ານໂຄງການນີ້ໂດຍຕົນເອງ;
- ທີ່ຈະປົກປັກຮັກສາເຊັກເງິນທີ່ທ່ານໄດ້ຮັບ.ກະຣຸນາລາຍງານຖ້າຫາກວ່າມັນເສັຽໄປຫລືຖືກຂີ້ລັກໄປໄປຫາອົງການບ່ອນທີ່ເບີກເຊັກເງິນອອກໃຫ້.ມັນບໍ່ສາມາດຖືກເຮັດໃຫມ່ໃຫ້ໄດ້;
- ທີ່ຈະແລກປ່ຽນເຊັກເງິນຂອງທ່ານນໍາຊາວນາຜູ້ທີ່ຖືກອະນຸຍາດໃນຣະຫວ່າງເດືອນງູນ 1 ແລະອົກໂຕເບີ 31.
- ທີ່ຈະເຂົ້າໃຈວ່າເງິນທຶນແມ່ນມີຈໍາກັດສໍາລັບໂຄງການນີ້ແລະມັນຈະຖືກໃຊ້ໃນແບບໃຜມາກ່ອນໄດ້ຮັບກ່ອນຈົນກວ່າເງິນທຶນຈະຫມົດໄປ.

ໂດຍອີງຕາມກົດຫມາຍຂອງຣັຖບານກາງແລະນະໂຍບາຍຂອງກະຊວງກະສິກັມ,ສະຖາບັນບ່ອນນີ້ໄດ້ຖືກຫວງຫ້າມບໍ່ໃຫ້ມີການແບ່ງແຍກຊົນຊັ້ນວັນນະອີງໃສ່ພື້ນຖານຂອງຜິວພັນ,ສີສັນ,ເຊື້ອຊາດດັ້ງເດີມ,ເພດ,ອາຍຸຫລືຄວາມເສັຽອົງຄະຫລືຄວາມເສັຽອົງຄະຫລືການແກ້ແຄ້ນສໍາລັບການເຄື່ອນໄຫວໃນສິດທິພົລເມືອງໃນຜ່ານມາຢູ່ໃນໂຄງການຫລືກິຈກັມແນວໃດແນວນຶ່ງທີ່ຖືກດໍາເນີນການຫລືອອກເງິນທຶນໃຫ້ໂດຍກົມ USDA. ເພື່ອຈະຍື່ນຄໍາຮ້ອງທຸກ,ຈົ່ງຂຽນຫນັງສືໄປຫາ USDA, Director, Office of Civil Rights, 1400 Independence Avenue, S.W., Washington, D.C. 20250-9410 ຫລືໂທຣະສັບໄປທີ່ (866) 632-9992 (ສຽງເວົ້າ) ຫລື(800) 877-8339 (TTY). ໃບຟອມຄໍາຮ້ອງທຸກສາມາດຖືກສົ່ງມາທາງອີແມລ໌ໄດ້ທີ່: program.intake@usda.gov. ໃບຟອມສາມາດຖືກພົບເຫັນຢູ່ທາງອອນລາຍນ໌ທີ່: http://www.ascr.usda.gov/complaint_filing_cust.html. USDA ເປັນຜູ້ບໍຣິການທີ່ໃຫ້ໂອກາດເທົ່າທຽມກັນຫມົດ.

**LA**